**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ກອງທຶນສົ່ງເສີມ ຈນກ ເລກທີ..0251../ທສວ

ນະຄອນຫຼວງວຽງຈັນ, ວັນທີ 05...ມີນາ 2025

# ໜັງສືແຈ້ງເຊີນຍື່ນເຈດຈຳນົງຄວາມສົນໃຈ
# ບໍລິການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ປີ 2021-2025

1. ກອງທຶນສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (ທສວ), ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ຮັບອະນຸມັດງົບປະມານ ປະຈຳປີ 2025 ຂອງ ທສວ ເພື່ອຈັດຈ້າງບໍລິສັດທີ່ປຶກສາ ເພື່ອ *[ສະໜອງບໍລິການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ປີ 2021-2025];*
2. ສຳລັບໜ້າວຽກທີ່ຈະມອບໝາຍ (TOR) ລາຍລະອຽດ ສາມາດພົວພັນເອົາເອກະສານໄດ້ຢູ່ທີ່ຊັ້ນ 03 ຫ້ອງ 301 ຂອງຫ້ອງການສຳນັກງານສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ, ກະຊວງອຸດສາຫະກຳ ແລະ ການຄ້າ, ເບີໂທ 021 410005, 020 2309 8876;
3. ທສວ ຂໍເຊີນບໍລິສັດທີ່ປຶກສາ " ທີ່ປຶກສາ" ທີ່ມີຄວາມສົນໃຈ ຍື່ນໜັງສືສະແດງຄວາມສົນໃຈຂອງຕົນ ເພື່ອສະໜອງການບໍລິການດັ່ງກ່າວ. ບໍລິສັດທີ່ມີຄວາມສົນໃຈ ຕ້ອງສະໜອງຂໍ້ມູນທີ່ສະແດງເຖິງຄວາມເໝາະສົມໃນການສະໜອງການບໍລິການ ທີ່ມີຄຸນວຸດທິ ແລະ ມີປະສົບການທີ່ກ່ຽວຂ້ອງ ໃນການປະຕິບັດການບໍລິການດັ່ງກ່າວ. ມາດຖານການຄັດເລືອກບໍລິສັດເຂົ້າໃນບັນຊີຄັດເລືອກ (ບັນຊີສັ້ນ) ມີດັ່ງນີ້:
   - ຕ້ອງເປັນບໍລິສັດ ທີ່ຖືກຕ້ອງຕາມກົດໝາຍໃນການດຳເນີນງານ ກ່ຽວກັບການບໍລິການທີ່ປຶກສາ (ມີໃບທະບຽນວິສາຫະກິດ ແລະ ໃບອະນຸຍາດດຳເນີນທຸລະກິດ) ເປັນບໍລິສັດເອກະລາດ ສຳລັບວຽກງານການບໍລິການທີ່ກ່ຽວຂ້ອງ;
   - ຕ້ອງມີໃບຢັ້ງຢືນການເສຍອາກອນ ປະຈຳປີ 2024 ຫຼື 2023;
   - ມີຊ່ຽວຊານ ຫຼື ບຸກຄະລາກອນ ທີ່ມີປະສົບການໃນການປະເມີນຜົນການສຳຫຼວດດ້ານເສດຖະກິດ ຫຼື ຕິດພັນກັບວຽກງານດັ່ງກ່າວ ແລະ ມີບຸກຄະລາກອນ ທີ່ພຽງພໍຕໍ່ການດຳເນີນງານ;
   - ຊ່ຽວຊານ ຫຼື ຫົວໜ້າທີມງານ ແລະ ທີມງານວິຊາການຜູ້ຊ່ວຍວຽກຫຼັກ ຕ້ອງຈົບລະດັບປະລິນຍາຕີ ຂຶ້ນໄປ (ສາຂາເສດຖະສາດ, ບໍລິຫານທຸລະກິດ ແລະ ການຄ້າ) ພ້ອມທັງສະແດງຫຼັກຖານຄວາມສຳເລັດໃນການບໍລິການທີ່ປຶກສາຜ່ານມາ ທີ່ພົວພັນກັບ *[ການເກັບກຳຂໍ້ມູນສຳຫຼວດດ້ານເສດຖະກິດ]* ໂດຍສະເພາະການບໍລິການທີ່ປຶກສາພາຍໃນປະເທດ ຫລື ໃນບັນດາກະຊວງຕ່າງໆ;
   - ສະໜອງໂຄງຮ່າງການຈັດຕັ້ງ ແລະ ບັນຊີລາຍຊື່, ຊີວະປະຫວັດຂອງຜູ້ຊ່ຽວຊານ ຫຼື ຫົວໜ້າທີມງານ ແລະ ທີມງານວິຊາການຜູ້ຊ່ວຍວຽກຫຼັກ ເພື່ອເປັນຂໍ້ມູນໃນຂະບວນການຄັດເລືອກເຂົ້າໃນບັນຊີ (ບັນຊີສັ້ນ).
4. ບໍລິສັດທີ່ປຶກສາຈະຖືກຄັດເລືອກຕາມຮູບແບບຈັດຈ້າງ *[ສະເພາະຄຸນນະພາບ (QBS)]* ຕາມຫຼັກການຈັດຊື້-ຈັດຈ້າງ ສຳລັບງົບປະມານຂອງລັດ ທີ່ກຳນົດໄວ້ໃນບົດແນະນຳການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;

5. ບໍລິສັດທີ່ປຶກສາທີ່ມີຄວາມສົນໃຈສາມາດຕິດຕໍ່ພົວພັນເອົາຂໍ້ມູນກ່ຽວກັບ *[ການສະໜອງບໍລິການ ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ປີ 2021-2025]* ດັ່ງກ່າວນີ້ ໄດ້ຕາມທີ່ຢູ່ຂ້າງລຸ່ມນີ້ໃນໂມງລັດຖະການ (8:30 ໂມງ ຫາ 16:00 ໂມງ), ວັນຈັນ ເຖິງ ວັນສຸກ;

6. ເອກະສານການສະແດງຄວາມສົນໃຈ ຕ້ອງສົ່ງເຖິງທີ່ຢູ່ຂ້າງລຸ່ມນີ້ ແລະ ປິດຮັບເອກະສານສະແດງຄວາມສົນໃຈ ໃນວັນທີ...09...ເມສາ 2025 ສົ່ງຢູ່ທີ່ຊັ້ນ 03, ຫ້ອງ 301 ຂອງສຳນັກງານສົ່ງເສີມຈຸນລະວິສາຫະກິດວິສາຫະກິດຂະໜາດນ້ອຍ ແລະ ກາງ, ກະຊວງອຸດສາຫະກຳ ແລະ ການຄ້າ, ເບີໂທ 021 410005, 020 2309 8876. 8

**ຜູ້ອຳນວຍການກອງທຶນ**

ປອ. ບຸນເພັງ ສີບຸນເຮືອງ